

ບົດຂ່າວ

ທຄຕລ ຮ່ວມກັບ ฟฟล ຍົກລະດັບການຊຳລະເງິນຄ່າໄຟຟ້າ ສູ່ລະບົບທັນສະໄໝ (E-Bill & Auto Payment)

ຂ່າວໂດຍ: ຂະແໜງພົວພັນນັກລົງທຶນ & ຮ່ວມມືສາກົນ https://www.bcel.com.la// bcelhqv@bcel.com.la



ໃນວັນອັງຄານ, ວັນທີ 21 ເມສາ 2026

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮ່ວມກັບ **ລັດວິສາຫະກິດ ໄຟຟ້າລາວ (ຟຟລ)** ໄດ້ຈັດພິທີລົງນາມເຊັນສັນຍາຢ່າງເປັນທາງການ **ເພື່ອຍົກລະດັບການຊຳລະຄ່າໄຟຟ້າ ສູ່ທັນສະໄໝ ຜ່ານລະບົບທະນາຄານ (ຊ່ອງທາງ BCEL One)** ເຊິ່ງພິທີໄດ້ຈັດຂຶ້ນຢູ່ທີ່ ສຳນັກງານໃຫຍ່ ທຄຕລ. ໃນການຮ່ວມມືຄັ້ງນີ້ ຖືເປັນການຫັນປ່ຽນສຳຄັນ ໃນການໃຫ້ບໍລິການຮັບຊຳລະຄ່າຊົມໃຊ້ກະແສໄຟຟ້າ **ຜ່ານລະບົບໃບບິນທັນສະໄໝ (E-Bill)** ແລະ **ການຊຳລະແບບອັດຕະໂນມັດ (Auto Payment)** ເພື່ອເປັນການຍົກລະດັບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສະດວກສະບາຍຍິ່ງຂຶ້ນ.





ໃນພິທີດັ່ງກ່າວ ໃຫ້ກຽດລົງນາມໃນສັນຍາໂດຍ **ທ່ານ ນາງ ສາຍ ສະໝອນ ຈັນທະຈັກ (ຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ)** ແລະ **ທ່ານ ປອ. ອາຄົມເດດ ວົງໄຊ (ຜູ້ອຳນວຍການໃຫຍ່ ລັດວິສາຫະກິດ ໄຟຟ້າລາວ).** ການຮ່ວມມືໃນຄັ້ງນີ້ ເນັ້ນໃສ່ການຫັນປ່ຽນຈາກການນຳໃຊ້ໃບບິນແບບເຈ້ຍ ໄປສູ່ໃບບິນແບບທັນສະໄໝ **(E-Bill)** ເພື່ອອຳນວຍຄວາມສະດວກໃນການກວດສອບຍອດຄ່າຊົມໃຊ້ໄຟຟ້າຜ່ານມືຖື, ຫຼຸດຜ່ອນຄວາມສ່ຽງໃນການລືມຈ່າຍຄ່າໄຟຟ້າ ດ້ວຍລະບົບຕັດເງິນແບບອັດຕະໂນມັດ **(Auto Payment).**

ໂດຍຖືໄດ້ວ່າ ເປັນອີກທາງເລືອກໜຶ່ງ ໃຫ້ກັບຜູ້ໃຊ້ບໍລິການໃນການເລືອກຮູບແບບການຊຳລະ ທັງແບບອັດຕະໂນມັດ ຫຼື ແບບຊຳລະດ້ວຍຕົນເອງ. ນອກນັ້ນ, ຍັງເປັນການສ້າງຄວາມໂປ່ງໃສ ດ້ວຍການແຈ້ງໃບບິນຄ່າຊົມໃຊ້ໄຟຟ້າແບບເອເລັກໂຕຣນິກ (E-Receipt).

ທັງໝົດນັ້ນ ສະແດງໃຫ້ເຫັນເຖິງ ການເປັນຄູ່ຮ່ວມຍຸດທະສາດທີ່ແໜ້ນແຟ້ນ ໃນການຮ່ວມມືພັດທະນາ, ການຫັນເປັນທັນສະໄໝ ແລະ ສ້າງເສດຖະກິດດິຈິຕອນ ຕາມວິໄສທັດ **"Lifestyle Bank"** ຂອງ ທຄຕລ ເພື່ອຮັບໃຊ້ສັງຄົມລາວຢ່າງຍືນຍົງ.